ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ 1251 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແນໃສ່ຈັດຕັ້ງປະຕິບັດວຽກງານກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສ້າງຄວາມເຂັ້ມແຂງໃນການປະຕິບັດກົດໝາຍ ໃຫ້ເຂັ້ມງວດ, ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກກຊສ"** ແມ່ນໂຄງປະກອບກົງຈັກ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນວຽກງານກວດກາ ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ກວດກາສິ່ງແວດລ້ອມໂຄງການລົງທຶນ, ສິ່ງແວດລ້ອມທົ່ວໄປ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ, ກົດໝາຍ, ດຳລັດ ແລະ ລະບຽບການ ກ່ຽວກັບວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ໂຄສະນາ, ເຜີຍແຜ່ ແນວທາງຂອງພັກ, ນະໂຍບາຍຂອງລັດຖະບານ, ກົດໝາຍ, ດຳລັດ, ລະບຽບການ ກ່ຽວກັບປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ການກວດກາສິ່ງແວດລ້ອມໂຄງການລົງທຶນ, ສິ່ງແວດລ້ອມທົ່ວໄປ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ຢ່າງທົ່ວເຖິງ;
3. ຄົ້ນຄວ້າ, ສ້າງ ແລະ ປັບປຸງຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ກວດກາສິ່ງແວດລ້ອມໂຄງການລົງທຶນ, ສິ່ງແວດລ້ອມທົ່ວໄປ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ສ້າງແຜນງານ, ແຜນການ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບ ວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
5. ສ້າງແຜນ ແລະ ຄຸ້ມຄອງ ການນຳໃຊ້ງົບປະມານຂອງລັດ, ພາຫະນະ, ຖານຂໍ້ມູນ, ຊັບສິນບັດຕ່າງໆ ແລະ ການກໍ່ສ້າງບຳລຸງພະນັກງານ-ລັດຖະກອນ, ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ພ້ອມທັງຕິດຕາມ, ກວດກາ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງກົມ ເພື່ອລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
6. ປະສານສົມທົບກັບອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການໄອຍະການປະຊາຊົນ, ສານປະຊາຊົນທຸກຂັ້ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການກວດກາ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
7. ຕິດຕາມ ກວດກາ ແລະ ເຂົ້າຮ່ວມການດຳເນີນຄະດີ ກ່ຽວກັບ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຄື່ອງປ່າຂອງດົງ, ຜະລິດຕະພັນໄມ້, ສັດນ້ຳ, ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ, ມົນລະພິດທາງດິນ, ນ້ຳ, ອາກາດ, ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີເປັນພິດ ນຳເອົາຄະດີທີ່ມີຄວາມຈຳເປັນມາດຳເນີນຢູ່ຂັ້ນສູນກາງ ຕາມກົດໝາຍ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ສືບສວນ-ສອບສວນ ເສັ້ນທາງການເງິນຂອງຜູ້ກະທຳຜິດ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ;
8. ກວດກາໂຄງການລົງທຶນ ແລະ ກິດຈະການ ກ່ຽວກັບຊັບພະຍາກອນປ່າໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ, ກວດກາໄມ້ສົ່ງເຂົ້າ-ສົ່ງອອກ ແລະ ອອກໃບຢັ້ງຢືນໄມ້ທີ່ຖືກຕ້ອງຕາມກົດໝາຍ, ກວດກາການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ກວດກາສິ່ງແວດລ້ອມໂຄງການລົງທຶນ ແລະ ສິ່ງແວດລ້ອມທົ່ວໄປ ຕາມກົດໝາຍກຳນົດ;
9. ຊຸກຍູ້, ຕິດຕາມ ແລະ ກວດກາ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ໜ່ວຍງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຈຸງານກວດກາຊັບພະຍາກອນ

ທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນຕາແສງ ແລະ ດ່ານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

10. ກວດກາເຫດການສຸກເສີນທາງດ້ານສິ່ງແວດລ້ອມ ທີ່ກໍ່ໃຫ້ເກີດມີນລະພິດທາງອາກາດ, ດິນ, ນໍ້າ, ສິ່ງລົບກວນ ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີເປັນພິດ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
11. ເຂົ້າຮ່ວມປະຊຸມ, ເຈລະຈາ ແລະ ຈັດຕັ້ງປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
12. ສ້າງ, ພັດທະນາ ແລະ ນຳໃຊ້ ລະບົບຖານຂໍ້ມູນ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານການກວດກາ ແລະ ຢັ້ງຢືນ ກ່ຽວກັບ ວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ;
13. ຕິດຕາມ ກວດກາ ແລະ ແຈ້ງມອບພັນທະງົບປະມານຕິດຕາມກວດກາສິ່ງແວດລ້ອມ ບັນດາໂຄງການລົງທຶນໃນການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ, ສັນຍາສຳປະທານ, ການອານະໄມຊີວະມອນສານ ແລະ ສັນຍາຕ່າງໆ ທີ່ຕິດພັນກັບໂຄງການ;
14. ປະເມີນ ແລະ ຈັດປະເພດໂຄງການລົງທຶນ ທີ່ຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ໂດຍປະສານສົມທົບກັບຂະແໜງການກ່ຽວຂ້ອງ;
15. ຄົ້ນຄວ້ານຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງ ພະນັກງານ-ລັດຖະກອນຂອງຕົນ ແຕ່ລະໄລຍະ;
16. ສະເໜີສ້າງຕັ້ງດ່ານ ແລະ ຈຸດກວດກາ ຊັບພະຍາກອນທຳມະຊາດ ຢູ່ສະຖານທີ່ທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ;
17. ຄົ້ນຄວ້າ, ພິຈາລະນາຄຳຮ້ອງ, ຄຳສະເໜີຂອງພົນລະເມືອງ ຫຼື ການຈັດຕັ້ງ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
18. ສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະ ໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ ກ່ຽວກັບວຽກງານກວດກາ ແລະ ດຳເນີນຄະດີ ໃນຂອບເຂດທົ່ວປະເທດ;
19. ປະສານສົມທົບກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ກວດກາປ່າໄມ້, ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ໜ່ວຍງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຈຸງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາແສງ;
20. ປະກອບສ່ວນເຂົ້າໃນການພັດທະນາບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີຄວາມເຂັ້ມແຂງ; ທັງກິດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບ ສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;
21. ສັງລວມ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
22. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານກວດກາປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ສິ່ງແວດລ້ອມໂຄງການລົງທຶນ, ສິ່ງແວດລ້ອມທົ່ວໄປ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ, ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ອອກຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຊີ້ນຳ, ຄຸ້ມຄອງ ຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການປະຕິບັດວຽກງານ ແລະ ຕົກລົງບັນຫາ ຢ່າງລະອຽດຈະແຈ້ງ;
4. ສະເໜີ ສ້າງຕັ້ງດ່ານ ແລະ ຈຸດກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ສະຖານທີ່ ທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ;
5. ສະເໜີອອກຂໍ້ຕົກລົງແຕ່ງຕັ້ງເຈົ້າໜ້າທີ່ກວດກາປ່າໄມ້ ລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ, ລົງໄປປະຈຳດ່ານ ແລະ ຈຸດກວດກາຊັບພະຍາກອນທຳມະຊາດ ໃນຂອບເຂດທົ່ວປະເທດ;
6. ກຳນົດແຜນງົບປະມານຕິດຕາມ, ກວດກາ ແລະ ຢັ້ງຢືນລະບົບຄ້ຳປະກັນໄມ້ທີ່ ຖືກຕ້ອງຕາມກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການ ຕາມກົດໝາຍ ແລະ ລະບຽບການ;
7. ສັ່ງໂຈະ ກິດຈະການ ທີ່ສ້າງຜົນກະທົບຮ້າຍແຮງ ຫຼື ສ້າງຄວາມເສຍຫາຍຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພ້ອມທັງກຳນົດມາດຕະການໃຫ້ເຈົ້າຂອງໂຄງການ ແລະ ກິດຈະການ ປັບປຸງ, ແກ້ໄຂ ຫຼື ຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວລາຍງານລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ;
8. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງໃຫ້ຢຸດເຊົາ, ໂຈະ ຫຼື ຖອນ ໃບຢັ້ງຢືນ ການເຄື່ອນໄຫວກິດຈະການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ໂຈະໜ້າທີ່ຕຳແໜ່ງຂອງພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຖ້າເຫັນວ່າມີການກະທຳທີ່ລະເມີດກົດໝາຍ ແລະ ລະບຽບການ;
9. ອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີອາຍາ;
10. ອຸທອນຄຳສັ່ງບໍ່ສັ່ງຟ້ອງຄະດີ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ໄປຍັງອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ ໃນກໍລະນີອົງການໄອຍະການຂັ້ນລຸ່ມ ບໍ່ດຳເນີນການສັ່ງຟ້ອງ ຕາມສຳນວນຄະດີ ຂອງເຈົ້າໜ້າທີ່ກວດກາປ່າໄມ້;
11. ສະເໜີລັດຖະມົນຕີ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ, ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ, ຈັດວາງ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທົ່ວກົມກວດກາ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງທີ່ກົດໝາຍ ແລະ ລະບຽບ ກຳນົດ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິຜົນ;

12. ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີ ລັດຖະມົນຕີ ເພື່ອແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ກວດກາປ່າໄມ້ ຂັ້ນສູນກາງ, ແຂວງ, ເມືອງ ແລະ ຕາແສງ ທີ່ປະຈຳຢູ່ດ່ານ ແລະ ຈຸດກວດກາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

13. ຮຽກໂຮມ ພະນັກງານນຳພາ-ຄຸ້ມຄອງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານ ເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງຕ່າງໆ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;

14. ຄົ້ນຄ້ວາ ແລະ ປະກອບຄຳເຫັນ ກ່ຽວກັບການຮ່ວມມືວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂຄງການລົງທຶນ ແລະ ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ;

15. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນທີ່ກົດໝາຍ ແລະ ລະບຽບການກຳນົດໄວ້;

16. ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ມີຄວາມຫຍຸ້ງຍາກ, ມີຄວາມເສຍຫາຍຫຼວງຫຼາຍ, ຕິດພັນກັບຫຼາຍພາກສ່ວນ, ອາຊະຍາກຳຂ້າມຊາດ ໂດຍນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສະຫຼຸບ ແລະ ປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຂຶ້ນສານຕາມຂະບວນການຍຸຕິທຳ;

17. ປະສານສົມທົບກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທຸກຂັ້ນ ທີ່ມີສ່ວນກ່ຽວຂ້ອງໃນວຽກງານກວດກາ ແລະ ການດຳເນີນຄະດີ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;

18. ນຳໃຊ້ເຄື່ອງມືສື່ສານ, ພາຫະນະ, ອາວຸດ, ຄ້ອນຕາຍຶດ, ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ກວດກາປ່າໄມ້, ເຄື່ອງແບບ ແລະ ເຄື່ອງໝາຍ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານ;

19. ເຂົ້າຮ່ວມປະຊຸມເຈລະຈາ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບວຽກງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

20. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ, ແລກປ່ຽນບົດຮຽນວຽກງານການກວດກາ ແລະ ການດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ, ການສ້າງບົດບັນທຶກການຮ່ວມມືການຈັດຕັ້ງປະຕິບັດວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດ, ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

21. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະ ມົນຕີຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ;
2. ພະແນກສືບສວນ-ສອບສວນ;
3. ພະແນກກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ;
4. ພະແນກກວດກາສັດນໍ້າ ແລະ ສັດປ່າ;
5. ພະແນກກວດກາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນໍ້າ;
6. ພະແນກກວດກາສິ່ງແວດລ້ອມຂະແໜງບໍ່ແຮ່;
7. ພະແນກກວດກາສິ່ງແວດລ້ອມຂະແໜງພະລັງງານ;
8. ພະແນກກວດກາສິ່ງແວດລ້ອມທົ່ວໄປ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ;

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ.
2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ;

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ;
3. ຫົວໜ້າພະແນກ ແລະ ທຽບເທົ່າ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບ

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ

**ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ**

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງລັດຖະບານ, ກະຊວງ ແລະ ກົມ ວາງອອກ ໃຫ້ໄດ້ຮັບຜົນດີ;
2. ຫັນເອົາແຜນການ, ແຜນງານ ແລະ ໂຄງການຂອງກົມ ມາເປັນໜ້າວຽກລະອຽດຂອງພະແນກຕົນ ພ້ອມທັງ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;

3. ຄົ້ນຄວ້າ, ຂຶ້ນແຜນຄວາມຕ້ອງການລັດຖະກອນ, ແຜນພັດທະນາ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານ-ລັດຖະກອນທີ່ເຮັດໜ້າທີ່ ໃນການກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ ໃນຂອບເຂດທົ່ວປະເທດ ທັງໄລຍະສັ້ນ ແລະ ໄລຍະຍາວ ໃນແຕ່ລະປີ ເພື່ອສະເໜີຂັ້ນເທິງພິຈາລະນາ;

4. ຄົ້ນຄວ້າ ແລະ ນຳສະເໜີ ກ່ຽວກັບການຄັດເລືອກ, ການບັນຈຸຊັບຊ້ອນ, ການຍົກຍ້າຍ, ປະເມີນການຈັດຕັ້ງປະຕິບັດວຽກງານ, ການປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ໃຫ້ແກ່ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໃນວຽກງານການກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;

5. ຊຸກຍູ້ ບັນດາພະແນກພາຍໃນກົມ, ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ໜ່ວຍງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ ຄຸ້ມຄອງ, ນຳໃຊ້, ສະຫຼຸບການນຳໃຊ້ງົບປະມານ ເພື່ອລາຍງານພາກສ່ວນກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

6. ຄຸ້ມຄອງ ຕາປະທັບ, ເອກະສານ, ເຄື່ອງແບບ ແລະ ເຄື່ອງໝາຍ, ເຄື່ອງມືສື່ສານ, ພາຫະນະ, ອາວຸດ, ຄ້ອນຍຶດ, ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ກວດກາປ່າໄມ້ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາໃນຂອບເຂດທົ່ວປະເທດ; ສັງລວມ ແລະ ຈໍລະຈອນເອກະສານຂາເຂົ້າ-ຂາອອກ ພ້ອມທັງຮັບຜິດຊອບວຽກງານພິທີການ-ເລຂານຸ ການຂອງກົມ;

7. ຮ່າງໜັງສືສະເໜີ, ຂໍ້ຕົກລົງ, ແຈ້ງການ ແລະ ເອກະສານ ທາງດ້ານບໍລິຫານຕ່າງໆ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງກົມ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ ຕາມລະບຽບການ;

8. ເປັນໃຈກາງຂຶ້ນແຜນງົບປະມານແຫ່ງລັດ, ຄຸ້ມຄອງນຳໃຊ້ງົບປະມານ, ລາຍຮັບວິຊາການ, ແຜນຈັດຊື້-ຈັດຈ້າງ, ກໍ່ສ້າງ, ສ້ອມແປງ, ຕຶກອາຄານ, ພາຫະນະ, ອຸປະກອນ, ເຄື່ອງໃຊ້ຫ້ອງການ ແລະ ວັດຖຸ ອື່ນໆ ພ້ອມທັງ ຈັດສັນງົບປະມານຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ໃຫ້ແກ່ທ້ອງຖິ່ນ ແລະ ສະຫຼຸບລາຍງານການນຳໃຊ້ງົບປະມານ ຕໍ່ຫົວໜ້າກົມແຕ່ລະໄລຍະ;

9. ເປັນເຈົ້າການສະເໜີຈັດຝຶກອົບຮົມສ້າງເປັນຄູຝຶກ ເພື່ອລົງໂຄສະນາ, ເຜີຍແຜ່ນິຕິກຳ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ໃນການກວດກາປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນໍ້າ, ການກວດກາສິ່ງແວດລ້ອມໂຄງການລົງທຶນ, ການຄວບຄຸມມົນລະພິດ, ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນຂອບເຂດທົ່ວປະເທດ ພ້ອມທັງຈັດຕັ້ງການໂຄສະນາເຜີຍແຜ່ບັນດານິຕິກຳຕ່າງໆອອກສູ່ສັງຄົມຢ່າງກວ້າງຂວາງ ນັບແຕ່ສູນກາງຮອດທ້ອງຖິ່ນ;

10. ເປັນໃຈກາງໃນການເກັບກຳ ແລະ ສັງລວມ ການສະເໜີປັບປຸງ ແລະ ສ້າງນິຕິກຳ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການກວດກາ ປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ, ສັດປ່າ, ການນຳໃຊ້ທີ່ດິນ, ຊັບພະຍາກອນນໍ້າ, ການກວດກາສິ່ງແວດລ້ອມໂຄງການລົງທຶນ, ການຄວບຄຸມມົນລະພິດ, ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ແລະ ວຽກງານການດຳເນີນຄະດີ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍກຳນົດ;

11. ຊຸກຍູ້, ຕິດຕາມ, ຄຸ້ມຄອງ, ສະຫຼຸບຕີລາຄາ ແລະ ການປະເມີນຜົນ ການຈັດຕັ້ງປະຕິບັດແຜນການ, ໂຄງການ, ແຜນການ ແລະ ແຜນງານຕ່າງໆ ທີ່ຂຶ້ນກັບກົມ ແລະ ຂະແໜງກວດກາ ຂັ້ນແຂວງ ເພື່ອລາຍງານໃຫ້ຂັ້ນເທິງໃນແຕ່ລະໄລຍະ;

12. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານ ຂອງ ຊ່ຽວຊານ ທີ່ຂຶ້ນກັບກົມ ແລະ ຂະແໜງກວດກາ ຂັ້ນແຂວງ ໃນຂອບເຂດທົ່ວປະເທດ;
13. ຮ່ວມມືສອງຝ່າຍ, ຫຼາຍຝ່າຍ, ພາກພື້ນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານງົບປະມານ ແລະ ເຕັກນິກວິຊາການເຂົ້າ ໃນວຽກງານຂອງກົມ ແລະ ຂະແໜງກວດກາຊັບພະຍາກອນທຳມະຊາດ ໃນຂອບເຂດທົ່ວປະເທດ ຕາມ ການອະນຸມັດຂອງຂັ້ນເທິງ;
14. ເປັນໃຈກາງປະສານງານ, ສະຫຼຸບ, ລາຍງານ ວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ ຂອງກົມ;
15. ຊຸກຍູ້ບັນດາພະແນກພາຍໃນກົມ, ຂະແໜງກວດກາຂັ້ນແຂວງ ແລະ ໜ່ວຍງານກວດກາຂັ້ນເມືອງ ໃນ ຂອບເຂດທົ່ວປະເທດ ເພື່ອຄຸ້ມຄອງ ແລະ ນຳໃຊ້ ແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
16. ສ້າງ, ປັບປຸງ ແລະ ຄຸ້ມຄອງຖານຂໍ້ມູນ ແລະ ເຜີຍແຜ່ຂໍ້ມູນຜົນການກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ບັນດາຂະແໜງການ ແລະ ທຸກພາກສ່ວນໃນສັງຄົມ;
17. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສ້າງແຜນການເຄື່ອນໄຫວ ຂອງພະແນກ, ກົມ ແລະ ບັນດາໂຄງການ, ແຜນການ ແລະ ແຜນງານຕ່າງໆ ທີ່ຂຶ້ນກັບກົມ ແລະ ຂະແໜງກວດກາ ພ້ອມທັງສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
18. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກສືບສວນ-ສອບສວນ**

ພະແນກສືບສວນ-ສອບສວນ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຄຳຮ້ອງຟ້ອງ, ແຈ້ງຄວາມ, ລາຍງານ, ຄຳສະເໜີ ຂອງພົນລະເມືອງ ແລະ ການຈັດຕັ້ງ ກ່ຽວກັບ ການລະເມີດກົດໝາຍ ວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍສັດປ່າ, ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການ ປະມົງ, ກົດໝາຍ ວ່າດ້ວຍສິ່ງແວດລ້ອມ, ກົດໝາຍ ວ່າດ້ວຍບໍ່ແຮ່, ປະມວນກົດໝາຍອາຍາ ແລະ ລະ ບຽບການທີ່ກ່ຽວຂ້ອງ;
2. ສະເໜີອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງ ປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີ ແລະ ບັນທຶກມອບ-ຮັບ, ກວດກາ, ຄຸ້ມຄອງປົກປັກຮັກສາເຄື່ອງຂອງກາງ ແລະ ຫຼັກຖານ ໃນລາຍຄະດີ;
3. ເອົາຄຳໃຫ້ການ ຜູ້ຖືກສົງໄສ, ຜູ້ຖືກຫາ, ພະຍານ, ໂຈດທາງແພ່ງ, ຜູ້ຖືກເສຍຫາຍ ໂດຍນຳໃຊ້ວິທີການ ສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ວ່າດ້ວຍການດຳ ເນີນຄະດີອາຍາ;
4. ສ້າງບົດລາຍງານຕໍ່ອົງການໄອຍະການປະຊາຊົນ ກ່ຽວກັບການອອກຄຳສັ່ງເປີດການສືບສວນ-ສອບສວນ, ຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ກຳນົດຕໍ່ເວລາການສືບສວນ-ສອບສວນ ແລະ ຕໍ່ກຳນົດຕໍ່ ເວລາການກັກຂັງພາງ;

5. ຄົ້ນຄວ້າ ແລະ ສະເໜີ ການນຳກົມພິຈາລະນາ ອອກຄຳສັ່ງ ໃຫ້ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ລົບລ້າງການດຳເນີນຄະດີ ທີ່ເຫັນວ່າບໍ່ຖືກຕ້ອງຕາມລະບຽບກົດໝາຍ;
6. ເປັນໃຈກາງເກັບກຳຂໍ້ມູນ, ສືບສວນ-ສອບສວນ ເຫດການສຸກເສີນດ້ານສິ່ງແວດລ້ອມ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
7. ຊຸກຍູ້, ຕິດຕາມ ແລະ ສົມທົບ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອດຳເນີນການສືບສວນ-ສອບສວນ ຜູ້ຖືກຫາ ໃນການລະເມີດກົດໝາຍ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ການສືບສວນ-ສອບສວນ ເສັ້ນທາງການເງິນ ພ້ອມທັງປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາ;
8. ປະສານສົມທົບກັບເຄືອຂ່າຍບັງຄັບໃຊ້ກົດໝາຍ ວ່າດ້ວຍສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ ເພື່ອນຳເອົາຜູ້ຖືກຫາ ທີ່ຫຼົບໜີໄປອາໄສຢູ່ຕ່າງປະເທດ ມາດຳເນີນຄະດີ ຕາມກົດໝາຍຂອງ ສປປ ລາວ;
9. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ, ຕິດຕາມການແກ້ໄຂຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ພ້ອມທັງຄຸ້ມຄອງຮັກສາສຳນວນ-ສຳເນົາຄະດີ ໃຫ້ເປັນລະບົບ ແລະ ຮັບປະກັນຄວາມປອດໄພ;
10. ສະເໜີຈັດຝຶກອົບຮົມສ້າງຄວາມເຂັ້ມແຂງ ວຽກງານການດຳເນີນຄະດີ ໃຫ້ແກ່ເຈົ້າໜ້າທີ່ກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ;
11. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ຕໍ່ກັບວຽກງານດຳເນີນຄະດີ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ;
12. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
13. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ**

ພະແນກກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ ມີໜ້າທີ່ ດັ່ງນີ້:

1. ກວດກາ ການດຳເນີນທຸລະກິດປ່າໄມ້, ການລັກລອບຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ, ຕາມສະຖານທີ່ຕ່າງໆ ເຊັ່ນ: ໃນ ແລະ ນອກສາມປະເພດປ່າ, ສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້, ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ, ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ, ເຟີນິເຈີ, ສາງເກັບມ້ຽນໄມ້, ຮ້ານຂາຍໄມ້ ແລະ ສະຖານທີ່ອື່ນໆ;
2. ຊຸກຍູ້, ຕິດຕາມ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ໜ່ວຍງານກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຕາແສງ ໃຫ້ເຄື່ອນໄຫວດຳເນີນການກວດກາການບຸກລຸກທຳລາຍ ປ່າໄມ້ ແລະ ເຄື່ອງປ່າຂອງດົງ, ກວດກາຕາມຈຸດຫຼໍ່ແຫຼມ ແລະ ສະຖານທີ່ອື່ນໆ ແລະ ວຽກງານຈັດຕັ້ງປະຕິບັດລະບົບຄ້ຳປະກັນໄມ້ ທີ່ຖືກຕ້ອງຕາມກົດໝາຍ;
3. ຕິດຕາມ, ກວດກາ ການສຳຫຼວດເພື່ອຂຸດຄົ້ນ, ການອະນຸມັດແຜນການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ;
4. ຄົ້ນຄວ້າ ແລະ ນຳໃຊ້ວິທີການຕ້ານ, ສະກັດກັ້ນ ແລະ ວິທີການກວດກາການດຳເນີນທຸລະກິດປ່າໄມ້, ການດຳເນີນກິດຈະການປ່າໄມ້ ແລະ ການບຸກລຸກທຳລາຍປ່າໄມ້ ແລະ ເຄື່ອງປ່າຂອງດົງ;
5. ສ້າງຜູ້ບອກຂ່າວ ແລະ ຕິດຕາມການລາຍງານຂໍ້ມູນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ແລະ ເຄື່ອງປ່າເຄື່ອງດົງ;

6. ກວດກາການນຳເຂົ້າ ແລະ ຈຳໜ່າຍ ແລະ ການມີໄວ້ຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້, ກົນຈັກ ແລະ ພາຫະນະລາກແກ່ ແລະ ຂົນສົ່ງໄມ້;
7. ກວດກາບັນດາກິດຈະການປ່າໄມ້, ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ກວດກາການດຳເນີນທຸລະກິດ ກ່ຽວກັບປ່າໄມ້ ແລະ ເຄື່ອງປ່າຂອງດົງ;
8. ຕິດຕາມ, ຊຸກຍູ້ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ໜ່ວຍງານກວດກາປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຕາແສງເພື່ອເຄື່ອນໄຫວດຳເນີນການກວດກາການບຸກລຸກທຳລາຍ ປ່າໄມ້, ເຄື່ອງປ່າຂອງດົງ ແລະ ວຽກງານຈັດຕັ້ງປະຕິບັດ ລະບົບຄ້ຳປະກັນໄມ້ ທີ່ຖືກຕ້ອງຕາມກົດໝາຍ;
9. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຂໍ້ມູນຕົວຈິງ ດ້ານເອກະສານ ແລະ ວັດຖຸຕົວຈິງ ເພື່ອເປັນບ່ອນອີງ ໃນການພິຈາລະນາອອກໃບຢັ້ງຢືນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;
10. ສ້າງ, ພັດທະນາ ແລະ ນຳໃຊ້ ລະບົບຂໍ້ມູນຂ່າວສານ, ຖານຂໍ້ມູນ ກ່ຽວກັບການຄ້າໄມ້ທີ່ທັນສະໄໝ, ພາບຖ່າຍດາວທຽມ ເພື່ອຕິດຕາມກວດກາການຂຸດຄົ້ນໄມ້, ການຕັດໄມ້, ການທຳລາຍປ່າໄມ້ ແລະ ເຄື່ອງປ່າຂອງດົງ ສາມາດແລກປ່ຽນຂໍ້ມູນໃຫ້ເປັນລະບົບ ທັງພາຍໃນ ແລະ ຕ່າງປະເທດ;
11. ອອກໃບຢັ້ງຢືນລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ;
12. ສະເໜີຈັດຝຶກອົບຮົມ, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ, ວຽກງານການກວດກາຢັ້ງຢືນຄວາມຖືກຕ້ອງຂອງໄມ້ ໃຫ້ເຈົ້າໜ້າທີ່ກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ;
13. ເຂົ້າຮ່ວມ ກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ກ່ຽວກັບວຽກງານກວດກາປ່າໄມ້ ແລະ ເຄື່ອງປ່າຂອງດົງ, ວຽກງານການກວດກາຢັ້ງຢືນຄວາມຖືກຕ້ອງຂອງໄມ້ ຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ;
14. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
15. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກກວດກາສັດນ້ຳ ແລະ ສັດປ່າ**

ພະແນກກວດກາສັດນ້ຳ ແລະ ສັດປ່າ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ນຳໃຊ້ວິທີການຕ້ານ, ສະກັດກັ້ນ ແລະ ກວດກາການລັກລອບ ລ່າ, ຫາ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ, ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດນ້ຳ ແລະ ສັດປ່າ;
2. ຕິດຕາມ ແລະ ຮັບການລາຍງານຂໍ້ມູນ, ຄຳຮ້ອງ, ຄຳສະເໜີ, ແຫຼ່ງຂ່າວ ຈາກພົນລະເມືອງ ຫຼື ການຈັດຕັ້ງ ກ່ຽວການລະເມີດກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບສັດນ້ຳ ແລະ ສັດປ່າ;
3. ກວດກາການລັກລອບລ່າ, ຫາ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ, ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດນ້ຳ ແລະ ສັດປ່າ, ຊາກ, ຊິ້ນສ່ວນຜະລິດຕະພັນສັດນ້ຳ ແລະ ສັດປ່າ ຕາມສະຖານທີ່ເຊັ່ນ: ດ່ານສາກົນ, ດ່ານທ້ອງຖິ່ນ, ດ່ານປະເພນີ, ເຂດຊາຍແດນ, ເຂດເສດຖະກິດພິເສດ-ເຂດເສດຖະກິດສະ 

ເພາະ, ສະໜາມບິນ, ສະຖາ ນີລົດໄຟ, ຕະຫຼາດ, ໂຮງແຮມ, ຮ້ານອາຫານ, ເສັ້ນທາງ ແລະ ສະຖານທີ່ອື່ນໆ;

4. ກວດກາການບຸກລຸກຖິ່ນທີ່ຢູ່ອາໃສ ແລະ ເຂດອະນຸລັກພັນສັດປ່າ ແຫຼ່ງອາຫານສັດນ້ຳ ແລະ ສັດປ່າ ເຊັ່ນ: ປ່າໄມ້, ທົ່ງຫຍ້າ, ຖ້ຳ, ປຸງ, ແມ່ນ້ຳລຳເຊ, ຫ້ວຍ, ບຶງ, ໜອງ ຫຼື ທີ່ດິນບໍລິເວນນ້ຳ;
5. ກວດກາກິດຈະການ ກ່ຽວກັບສັດນ້ຳ ແລະ ສັດປ່າ ເຊັ່ນ: ການສຳຫຼວດ, ການກຳນົດຂອບເຂດປົກປັກຮັກສາ, ການສ້າງສູນຟື້ນຟູສຸຂະພາບ, ການປ່ອຍສັດຄືນສູ່ທຳມະຊາດ ແລະ ອື່ນໆ;
6. ກວດກາການດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ສັດປ່າ ການຂະຫຍາຍພັນສັດ, ການລ້ຽງ, ສວນສັດ, ຟາມສັດ, ສູນປິ່ນປົວສັດປ່າ, ການນຳເອົາສັດມາສະແດງ, ຫໍພິພິດທະພັນສັດ, ການສ້າງສາລະຄະດີສັດ, ການເຊົ່າ ແລະ ກຳມະສິດໃນການຄອບຄອງສັດ, ຊາກສັດ, ຊິ້ນສ່ວນຜະລິດຕະພັນຈາກສັດນ້ຳ ແລະ ສັດປ່າ;
7. ກວດກາ ການຜະລິດ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ການນຳໃຊ້ ເຄື່ອງມື, ອຸປະກອນລ່າສັດ ອາວຸດລ່າເນື້ອ, ຢາເບື່ອ, ສານພິດ, ທາດເຄມີ, ແສງ, ສຽງ, ຄື້ນ, ອຸປະກອນຈັບສັດນ້ຳ, ສັດປ່າ, ເຄື່ອງໄຟຟ້າ, ອວນ, ລີ່, ມອງຕາຖີ່, ໂຕ່ງ, ລອບຂະໜາດໃຫ່ຍ ແລະ ອື່ນໆທີ່ລະເມີດກົດໝາຍ;
8. ຊຸກຍູ້, ຕິດຕາມ ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ນະຄອນຫຼວງວຽງຈັນ, ຂັ້ນເມືອງ, ນະຄອນ, ຕາແສງ ໃນຂອບເຂດທົ່ວປະເທດ ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນ ການລັກລອບລ່າ, ຫາ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ, ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດນ້ຳ ແລະ ສັດປ່າ, ຊາກ, ຊິ້ນສ່ວນ, ຜະລິດຕະພັນສັດນ້ຳ ແລະ ສັດປ່າ;
9. ຊຸກຍູ້, ຕິດຕາມ, ກວດກາ ແລະ ລາຍງານ ການຈັດຕັ້ງປະຕິບັດ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍ
10. ຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ລວມທັງສົນທິສັນຍາ ແລະ ສັນຍາສາກົນອື່ນໆ ທີ່ ສປປ ລາວ ເປັນພາຄີ;
11. ສົມທົບ ຄະນະປະສານງານ ເຄືອຂ່າຍ LAO-WEN ແລະ ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການບັງຄັບໃຊ້ກົດໝາຍວ່າດ້ວຍສັດປ່າ, ກົດໝາຍ ວ່າດ້ວຍປ່າໄມ້ ແລະ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ ເພື່ອຕ້ານ ແລະ ສະກັດກັ້ນອາຊະຍາກຳສັດນ້ຳ, ສັດປ່າ ແລະ ປ່າໄມ້ ພາຍໃນ ແລະ ຂ້າມຊາດ;
12. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອກວດກາການລັກລອບລ່າ, ຫາ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ, ເຄື່ອນຍ້າຍ, ມີໄວ້ໃນຄອບຄອງສັດນ້ຳ ແລະ ສັດປ່າ, ຊາກຊິ້ນສ່ວນຜະລິດຕະພັນສັດນ້ຳ ແລະ ສັດປ່າ ໃນຂອບເຂດທົ່ວປະເທດ;
13. ປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອສັດປ່າ ທີ່ພົວພັນກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສັດນ້ຳ ແລະ ສັດປ່າ;
14. ສ້າງຕາໜ່າງຜູ້ບອກຂ່າວ ເພື່ອຕິດຕາມການລັກລອບ ລ່າ, ຫາ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ, ເຄື່ອນຍ້າຍ, ການມີໄວ້ໃນຄອບຄອງສັດ, ຊາກສັດ, ຊິ້ນສ່ວນ, ຜະລິດຕະພັນຈາກສັດນ້ຳ ແລະ ສັດປ່າ ແລະ ການຜະລິດ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ການນຳໃຊ້ ເຄື່ອງມື ແລະ ອຸປະກອນລ່າສັດອື່ນໆ;
15. ສ້າງ, ປັບປຸງ, ຄຸ້ມຄອງ ລະບົບຖານຂໍ້ມູນ ເພື່ອເກັບກຳ ແລະ ວິເຄາະຂໍ້ມູນ ອາຊະຍາກຳສັດນ້ຳ ແລະ ສັດປ່າທາງສື່ສັງຄົມອອນລາຍ, ສັງລວມບັນຊີ ຜູ້ລ່າ, ຫາ, ຄ້າຂາຍ, ເຄື່ອນຍ້າຍ ສັດນ້ຳ ແລະ ສັດປ່າ ແລະ ຊະນິດພັນສັດປ່າ ທີ່ໄດ້ມອບໃຫ້ບັນດາສູນຊ່ວຍເຫຼືອສັດປ່າ;

16. ສະເໜີຈັດຝຶກອົບຮົມ, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາສັດນ້ຳ ແລະ ສັດປ່າ ໃຫ້ເຈົ້າໜ້າທີ່ກວດກາປ່າໄມ້ ໃນຂອບເຂດທົ່ວປະເທດ;
17. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ໂຄສະນາເຜີຍແຜ່, ທັດສະນະສຶກສາ ກ່ຽວກັບວຽກງານສັດນ້ຳ ແລະ ສັດປ່າ ຢູ່ພາຍໃນປະເທດ ແລະ ສາກົນ
18. ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
19. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ພະແນກກວດກາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ**

ພະແນກກວດກາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາ ເຜີຍແຜ່ ແລະ ປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ ໃຫ້ເປັນແຜນການ, ແຜນງານ, ໂຄງການ ໃນແຕ່ລະໄລຍະ;
2. ກວດກາການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານ, ແຜນຄຸ້ມຄອງອ່າງຮັບນ້ຳ, ການຄຸ້ມຄອງອ່າງເກັບນ້ຳ, ການກຳນົດເຂດສະຫງວນນ້ຳ, ການນຳໃຊ້ຊັບພະຍາກອນນ້ຳ ແລະ ການຄຸ້ມຄອງນ້ຳເປື້ອນ;
3. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ກວດກາ ການເຊົ່າ, ການສຳປະທານທີ່ດິນລັດ ແລະ ການຫັນປ່ຽນທີ່ດິນ ລວມທັງການດຳເນີນທຸລະກິດ ກ່ຽວກັບທີ່ດິນປ່າໄມ້ ໃນຂອບເຂດທົ່ວປະເທດ;
4. ກວດກາການຈັດຕັ້ງປະຕິບັດ ການອອກເອກະສານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ໃນຂອບເຂດທົ່ວປະເທດ;
5. ສ້າງ ແລະ ປັບປຸງ ຄຳແນະນຳ ແລະ ຄູ່ມືວິຊາການ ໃນການຕິດຕາມກວດກາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ;
6. ຄົ້ນຄວ້າ ແລະ ນຳໃຊ້ວິທີການຕ້ານ, ສະກັດກັ້ນ ແລະ ວິທີການກວດກາ ການບຸກລຸກ, ຈັບຈອງ ແລະ ທຳລາຍທີ່ດິນ;
7. ພັດທະນາຖານຂໍ້ມູນຕິດຕາມ ກວດກາ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ;
8. ຄົ້ນຄວ້າ ແລະ ນຳສະເໜີການນຳກົມ ພິຈາລະນາອອກ ແຈ້ງເຕືອນ, ປັບໃໝ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ແຈ້ງໂຈະ, ຍົກເລີກ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຂອງບັນດາໂຄງການລົງທຶນ ທີ່ມີການນຳໃຊ້ດິນ ແລະ ຊັບພະຍາກອນນ້ຳ ບໍ່ສອດຄ່ອງຕາມເປົ້າໝາຍ;
9. ຊຸກຍູ້, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາການນຳໃຊ້ທີ່ດິນ, ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ແກ່ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ;
10. ຄຸ້ມຄອງຊັບສິນ ແລະ ເອກະສານຂອງພະແນກຕົນ ພ້ອມທັງຂຶ້ນແຜນການ, ງົບປະມານ; ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
11. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

ມາດຕາ 12 ພະແນກກວດກາສິ່ງແວດລ້ອມຂະແໜງບໍ່ແຮ່

ພະແນກກວດກາສິ່ງແວດລ້ອມຂະແໜງບໍ່ແຮ່ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ແລະ ປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານກວດກາສິ່ງແວດລ້ອມ ໃຫ້ເປັນແຜນການ, ແຜນງານ, ໂຄງການ ໃນແຕ່ລະໄລຍະ;
2. ສ້າງ ແລະ ປັບປຸງ ຄູ່ມືແນະນຳວິຊາການ ໃນການຕິດຕາມກວດກາສິ່ງແວດລ້ອມ ໂຄງການລົງທຶນຂະແໜງ ບໍ່ແຮ່;
3. ກວດກາການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ໂຄງການລົງທຶນຂະແໜງບໍ່ແຮ່ ຕາມບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ບົດບັນທຶກເງື່ອນໄຂຂອງໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ລວມທັງບົດບັນທຶກຄວາມເຂົ້າໃຈ ໃນໄລຍະຊອກຄົ້ນ ແລະ ສຳຫຼວດ;
4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປະເມີນ ແລະ ຈັດປະເພດ ການປະຕິບັດພັນທະດ້ານສິ່ງແວດລ້ອມຂອງໂຄງການລົງທຶນຂະແໜງບໍ່ແຮ່ ປະຈຳປີ ເພື່ອສະເໜີຕໍ່ຄະນະນຳກະຊວງ ພິຈາລະນາອອກໃບຢັ້ງຢືນການປະຕິບັດພັນທະທາງດ້ານສິ່ງແວດລ້ອມ;
5. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ເຂົ້າຮ່ວມຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເອກະສານສະເໜີຂໍອະນຸມັດລົງທຶນຕ່າງໆ ຂອງໂຄງການລົງທຶນ ຂະແໜງບໍ່ແຮ່ ຕາມການມອບໝາຍ;
6. ທົບທວນ ແລະ ລາຍງານຫົວໜ້າກົມ ພິຈາລະນາການຢັ້ງຢືນບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໃນໄລຍະຜ່ານມາ ຂອງໂຄງການລົງທຶນຂະແໜງບໍ່ແຮ່ ເພື່ອສະເໜີຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຕາມລະບຽບການ;
7. ພັດທະນາຖານຂໍ້ມູນຕິດຕາມ ກວດກາສິ່ງແວດລ້ອມ ໂຄງການລົງທຶນ ຂະແໜງບໍ່ແຮ່;
8. ຄົ້ນຄວ້າ ແລະ ນຳສະເໜີການນຳກົມ ພິຈາລະນາອອກ ແຈ້ງເຕືອນ, ປັບໃໝ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ແຈ້ງໂຈະ, ຍົກເລີກ ຫຼື ຖອນ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ຂອງບັນດາໂຄງການລົງທຶນຂະແໜງບໍ່ແຮ່ ພ້ອມທັງກຳນົດມາດຕະການໃຫ້ເຈົ້າຂອງໂຄງການ ໃນຂະແໜງບໍ່ແຮ່ ປັບປຸງ, ແກ້ໄຂ ຫຼື ຟື້ນຟູ ສິ່ງແວດລ້ອມ;
9. ແຈ້ງມອບພັນທະງົບປະມານ ຕິດຕາມ, ກວດກາ ສິ່ງແວດລ້ອມ ໂຄງການລົງທຶນຂະແໜງບໍ່ແຮ່ ໃນການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ;
10. ຊຸກຍູ້, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາໂຄງການລົງທຶນຂະແໜງບໍ່ແຮ່ ໃຫ້ແກ່ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງ ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ;
11. ຄຸ້ມຄອງຊັບສິນ ແລະ ເອກະສານຂອງພະແນກຕົນ ພ້ອມທັງຂື້ນແຜນການ, ງົບປະມານ; ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ພະແນກກວດກາສິ່ງແວດລ້ອມຂະແໜງພະລັງງານ**

ພະແນກກວດກາສິ່ງແວດລ້ອມຂະແໜງພະລັງງານ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາ ເຜີຍແຜ່ ແລະ ປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານກວດກາສິ່ງແວດລ້ອມ ໃຫ້ເປັນແຜນການ, ແຜນງານ, ໂຄງການ ໃນແຕ່ລະໄລຍະ;
2. ສ້າງ ແລະ ປັບປຸງຄູ່ມືແນະນຳວິຊາການ ໃນການຕິດຕາມ ກວດກາສິ່ງແວດລ້ອມ ໂຄງການລົງທຶນຂະແໜງພະລັງງານ;
3. ກວດກາການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມໂຄງການລົງທຶນ ຂະແໜງພະລັງງານ ຕາມບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ບົດບັນທຶກເງື່ອນໄຂຂອງໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ແລະ ການອານະໄມຊີວະມອນສານ;
4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປະເມີນ ແລະ ຈັດປະເພດ ການປະຕິບັດພັນທະດ້ານສິ່ງແວດລ້ອມຂອງໂຄງການລົງທຶນຂະແໜງພະລັງງານປະຈຳປີ ເພື່ອສະເໜີຕໍ່ຄະນະນຳກະຊວງ ພິຈາລະນາອອກໃບຢັ້ງຢືນການປະຕິບັດພັນທະທາງດ້ານສິ່ງແວດລ້ອມ;
5. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ເຂົ້າຮ່ວມຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເອກະສານສະເໜີຂໍອະນຸມັດລົງທຶນຕ່າງໆ ຂອງໂຄງການລົງທຶນ ຂະແໜງພະລັງງານ ຕາມການມອບໝາຍ;
6. ທົບທວນ ແລະ ລາຍງານຫົວໜ້າກົມ ພິຈາລະນາການຢັ້ງຢືນບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໃນໄລຍະຜ່ານມາ ຂອງໂຄງການລົງທຶນ ຂະແໜງພະລັງງານ ເພື່ອສະເໜີຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຕາມລະບຽບການ;
7. ພັດທະນາຖານຂໍ້ມູນຕິດຕາມ, ກວດກາ ສິ່ງແວດລ້ອມໂຄງການລົງທຶນ ຂະແໜງພະລັງງານ;
8. ຄົ້ນຄວ້າ ແລະ ນຳສະເໜີການນຳກົມ ພິຈາລະນາອອກ ແຈ້ງເຕືອນ, ປັບໃໝ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ແຈ້ງໂຈະ, ຍົກເລີກ ຫຼື ຖອນ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມຂອງບັນດາໂຄງການລົງທຶນຂະແໜງພະລັງງານ ພ້ອມທັງກຳນົດມາດຕະການໃຫ້ເຈົ້າຂອງໂຄງການໃນຂະແໜງພະລັງງານ ປັບປຸງ, ແກ້ໄຂ ຫຼື ຟື້ນຟູ ສິ່ງແວດລ້ອມ;
9. ແຈ້ງມອບພັນທະງົບປະມານ ຕິດຕາມ, ກວດກາ ສິ່ງແວດລ້ອມ ໂຄງການລົງທຶນຂະແໜງພະລັງງານ ໃນການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນການຄຸ້ມຄອງ ແລະ ຕິດຕາມ, ກວດກາ ສິ່ງແວດລ້ອມ;
10. ຊຸກຍູ້, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາໂຄງການລົງທຶນຂະແໜງພະລັງງານ ໃຫ້ແກ່ຂະແໜງກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມສຳມະນາ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ;
11. ຄຸ້ມຄອງຊັບສິນ ແລະ ເອກະສານຂອງພະແນກຕົນ ພ້ອມທັງຂຶ້ນແຜນການ, ງົບປະມານ; ຄົ້ນຄວ້າ, ເກັບກຳຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

ມາດຕາ 14 ພະແນກກວດກາສິ່ງແວດລ້ອມທົ່ວໄປ

ພະແນກກວດກາສິ່ງແວດລ້ອມທົ່ວໄປ ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາ ເຜີຍແຜ່ ແລະ ປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສິ່ງແວດລ້ອມ, ມົນລະພິດ, ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີເປັນພິດ ໃຫ້ເປັນແຜນການ, ແຜນງານ, ໂຄງການ ໃນແຕ່ລະໄລຍະ;
2. ສ້າງ ແລະ ປັບປຸງຄູ່ມືແນະນໍາວິຊາການ ກ່ຽວກັບການຄວບຄຸມມົນລະພິດ, ຄຸ້ມຄອງສານເຄມີເປັນພິດ, ສິ່ງເສດເຫຼືອ, ສິ່ງເສດເຫຼືອອັນຕະລາຍ ແລະ ການຕິດຕາມກວດກາສິ່ງແວດລ້ອມໂຄງການລົງທຶນ ຂະແໜງອຸດສາຫະກໍາ, ກະສິກໍາ, ພື້ນຖານໂຄ່ງລ່າງ, ທ່ອງທ່ຽວ, ເຂດນິຄົມອຸດສາຫະກໍາ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
3. ກວດກາບັນຫາມົນລະພິດ, ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫຼືອອັນຕະລາຍ, ສານເຄມີເປັນພິດ ລວມທັງໝໍ້ໄຟເກົ່າຈາກຍານພາຫະນະ, ແຜງພະລັງງານແສງຕາເວັນ, ການຄຸ້ມຄອງ ນໍາເຂົ້າ-ສົ່ງອອກ, ການເຄື່ອນຍ້າຍຢູ່ໃນຈຸດກວດກາຊັບພະຍາກອນທໍາມະຊາດ;
4. ກວດກາການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມໂຄງການລົງທຶນຂະແໜງ ອຸດສາຫະກໍາ, ກະສິກໍາ, ພື້ນຖານໂຄ່ງລ່າງ, ທ່ອງທ່ຽວ, ເຂດນິຄົມອຸດສາຫະກໍາ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕາມບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ບົດບັນທຶກເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປະເມີນ ແລະ ຈັດປະເພດ ການປະຕິບັດພັນທະດ້ານສິ່ງແວດລ້ອມຂອງໂຄງການລົງທຶນຂະແໜງສິ່ງແວດລ້ອມທົ່ວໄປ ປະຈໍາປີ ເພື່ອສະເໜີຕໍ່ຄະນະນໍາກະຊວງ ພິຈາລະນາ ອອກໃບຢັ້ງຢືນການປະຕິບັດພັນທະທາງດ້ານສິ່ງແວດລ້ອມ
6. ຄົ້ນຄວ້າ, ປະກອບຄໍາເຫັນ ແລະ ເຂົ້າຮ່ວມຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເອກະສານສະເໜີຂໍອະນຸມັດລົງທຶນຕ່າງໆ ຂອງໂຄງການລົງທຶນ ຂະແໜງສິ່ງແວດລ້ອມທົ່ວໄປ ຕາມການມອບໝາຍ;
7. ພັດທະນາຖານຂໍ້ມູນຕິດຕາມ ກວດກາສິ່ງແວດລ້ອມ ໂຄງການລົງທຶນຂະແໜງສິ່ງແວດລ້ອມທົ່ວໄປ;
8. ຄົ້ນຄວ້າ ແລະ ນໍາສະເໜີການນໍາກົມ ພິຈາລະນາອອກ ແຈ້ງເຕືອນ, ປັບໃໝ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງ ແຈ້ງໂຈະ, ຍົກເລີກ ຫຼື ຖອນ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມຂອງບັນດາໂຄງການລົງທຶນຂະແໜງພະລັງງານ ພ້ອມທັງກໍານົດມາດຕະການໃຫ້ເຈົ້າຂອງໂຄງການລົງທຶນ ຂະແໜງສິ່ງແວດລ້ອມທົ່ວໄປ ປັບປຸງ, ແກ້ໄຂ ຫຼື ຟື້ນຟູ ສິ່ງແວດລ້ອມ;
9. ກວດກາການຄຸ້ມຄອງ ແລະ ກໍາຈັດຂີ້ເຫຍື້ອ, ການນໍາເຂົ້າ, ການນໍາໃຊ້, ການຂົນສົ່ງ, ການເກັບຮັກສາ, ການກໍາຈັດ ແລະ ການບໍາບັດເຄມີເປັນພິດ ແລະ ສິ່ງເສດເຫຼືອອັນຕະລາຍ, ທາດກໍາມັນຕະພາບລັງສີ ໃຫ້ຖືກຕ້ອງຕາມ ລະບຽບການທີ່ກ່ຽວຂ້ອງ;
10. ຈັດຕັ້ງປະຕິບັດ ສົນທິສັນຍາ, ອານຸສັນຍາ ແລະ ຂໍ້ຕົກລົງ ກ່ຽວກັບ ສິ່ງແວດລ້ອມ (ມົນລະພິດ, ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີເປັນພິດ) ຕາມພາລະບົດບາດຂອງກົມ, ລະບຽບ ແລະ ກົດໝາຍ;
11. ທົບທວນ ແລະ ລາຍງານຫົວໜ້າກົມ ພິຈາລະນາການຢັ້ງຢືນບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ, ກວດກາ ສິ່ງແວດລ້ອມໃນໄລຍະຜ່ານມາ ຂອງໂຄງການລົງທຶນ ຂະແໜງສິ່ງແວດລ້ອມທົ່ວໄປ ເພື່ອສະເໜີຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຕາມລະບຽບການ;
12. ແຈ້ງມອບພັນທະງົບປະມານຕິດຕາມກວດກາສິ່ງແວດລ້ອມ ໂຄງການລົງທຶນ ຂະແໜງສິ່ງແວດລ້ອມທົ່ວໄປ ໃນການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນການຄຸ້ມຄອງ ແລະ ຕິດຕາມ, ກວດກາ ສິ່ງແວດລ້ອມ;

13. ຊຸກຍູ້, ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານກວດກາໂຄງການລົງທຶນ ຂະແໜງສິ່ງແວດລ້ອມທົ່ວໄປ ໃຫ້ແກ່ຂະແໜງກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ລວມທັງເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ;
14. ຄຸ້ມຄອງຊັບສິນ ແລະ ເອກະສານຂອງພະແນກຕົນ ພ້ອມທັງຂຶ້ນແຜນການ, ງົບປະມານ; ຄົ້ນຄວ້າ, ເກັບກໍາຂໍ້ມູນ, ສັງລວມ, ສະຫຼຸບລາຍງານວຽກງານ ຂອງພະແນກ ແລະ ກົມ ປະຈໍາເດືອນ, 3 ເດືອນ, 6 ເດືອນ 9 ເດືອນ, ປະຈໍາປີ, ກາງສະໄໝ ແລະ 5 ປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
15. ປະຕິບັດໜ້າທີ່ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 15 ຫຼັກການ

ກົມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນໍາເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນໍາເອົາແຜນການປະຈໍາປີ, ແຜນ 05 ປີ ຂອງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 16 ແບບແຜນວິທີເຮັດວຽກ

ກົມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ-ຄະນະນໍາ ແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄໍາເຫັນ ໃນການຈັດຕັ້ງປະຕິບັດແຜນການ ແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງ ຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນໍາ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສໍາຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມຊາບ ເປັນລາຍລັກອັກສອນ ພາຍຫຼັງຫົວໜ້າກົມ ກັບມາປະຈໍາການ; ⺌

5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມຊາບ ເປັນລາຍລັກອັກສອນ ພາຍຫຼັງຫົວໜ້າກົມ ກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 17 ງົບປະມານ ແລະ ຕາປະທັບ

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີງົບປະມານ, ຕາປະທັບ, ເຄື່ອງແບບ, ເຄື່ອງໝາຍ ແລະ ບັດເຄື່ອນໄຫວພິເສດ ຂອງເຈົ້າໜ້າທີ່ກວດກາປ່າໄມ້ ເປັນສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

### ມາດຕາ 18 ການຈັດຕັ້ງປະຕິບັດ

ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 19 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້ ສະບັບເລກທີ 1504/ກປ, ລົງວັນທີ 22 ເມສາ 2022 ແລະ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາຊັບພະຍາກອນທຳ ແລະ ສິ່ງແວດລ້ອມ ສະບັບເລກທີ 5961/ກຊສ, ລົງວັນທີ 30 ພະຈິກ 2021.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**